GCI

# ບົດຮຽນທີ 5
# ຫລັກຄວາມເຊື່ອ ຂັ້ນພື້ນຖານ

## ການແນະນຳ:

ຈຸດປະສົງຂອງບົດຮຽນ:

- ເພື່ອຄົ້ນຫາຄວາມເປັນເຈົ້າຂອງພະເຈົ້າ ແລະ ພະລັກສະນະຂອງພະອົງ.
- ເພື່ອສຶກສາຫລັກຄວາມເຊື່ອກ່ຽວກັບມະນຸດ.
- ເພື່ອເຮັດຄວາມເຂົ້າໃຈກັບຄວາມພົ້ນຂອງພວກເຮົາໃນພະຄຣິດ.
- ເພື່ອສຶກສາເລື່ອງການສິ້ນພະຊົນ ແລະ ການເປັນຄືນມາຈາກຕາຍຂອງພະເຢຊູຄຣິດ.
- ເພື່ອສຶກສາຄວາມໝາຍ, ຄ່າຈ້າງ ແລະ ວິທີແກ້ບັນຫາເລື່ອງຄວາມບາບ.
- ເພື່ອສຶກສາຫລັກຄວາມເຊື່ອເລື່ອງຕຣີເອກະນຸພາບ.

## ໂຄງຮ່າງບົດຮຽນ

I. ຫລັກຄວາມເຊື່ອພື້ນຖານກ່ຽວກັບ - ພະເຈົ້າ
- ກ. ຄຳແນະນຳ.
- ຂ. ການຊົງເປັນຢູ່ຂອງພະເຈົ້າ.
- ຄ. ຄວາມເປັນເຈົ້າຂອງພະເຈົ້າ.
- ງ. ທຳມະຊາດ ຫລື ພະລັກສະນະຂອງພະເຈົ້າ. ພະອົງເປັນຢ່າງໃດ?
- ຈ. ພະລັກສະນະສະເພາະຂອງພະເຈົ້າ – ຄວາມແຕກຕ່າງຂອງພະອົງ.
- ສ. ພະເຈົ້າຊົງຕຣີເອກະນຸພາບ
- ຊ. ພະນາມຂອງພະເຈົ້າ.

II. ຫລັກຄວາມເຊື່ອພື້ນຖານກ່ຽວກັບ - ມະນຸດ
- ກ. ຕົ້ນເດີມຂອງມະນຸດ.
- ຂ. ສະພາບຂອງມະນຸດເມື່ອຖືກຊົງສ້າງເທື່ອທຳອິດ.
- ຄ. ມະນຸດຍັງຮັກສາສະພາບອັນສົມບູນແບບຢ່າງນີ້ໄວ້ບໍ?

III. ຫລັກຄວາມເຊື່ອພື້ນຖານກ່ຽວກັບ - ຄວາມບາບ
- ກ. ຄຳແນະນຳ.
- ຂ. ຄວາມບາບແມ່ນຫຍັງ?
- ຄ. ບາບແຕ່ຕົ້ນເດີມ.
- ງ. ຄວາມບາບເຂົ້າມາໃນໂລກນີ້ແນວໃດ.
- ຈ. ຜົນຂອງຄວາມບາບຄື ຄວາມຕາຍ.
- ສ. ການຕອບໂຕ້ຂອງມະນຸດຕໍ່ຄວາມບາບ.
- ຊ. ມະນຸດຊາດຕົກຢູ່ໃນບາບໝົດ.

GCI

## IV. ຫລັກຄວາມເຊື່ອພື້ນຖານກ່ຽວກັບ - ຄວາມພົ້ນ

ກ. ຄໍາແນະນໍາ.
ຂ. ມະນຸດຕ້ອງການພະຜູ້ໂຜດໃຫ້ພົ້ນ.
ຄ. ພະຜູ້ໂຜດໃຫ້ພົ້ນ – ພະເຢຊູຄຣິດ.
ງ. ການສິ້ນພະຊົນຂອງພະຜູ້ໄຖ່, ຊົງຖືກຄຶງໄວ້ທີ່ໄມ້ກາງແຂນ.
ຈ. ການຊົງເປັນຄືນມາຈາກຕາຍຂອງພະຜູ້ໄຖ່, ພະເຢຊູຄຣິດ.
ສ. ການຊົງຂຶ້ນຄອງລາດຂອງພະຜູ້ໄຖ່, ພະເຢຊູຄຣິດ.
ຊ. ການຮັບເອົາການຊົງໂຜດໃຫ້ພົ້ນຈາກພະຜູ້ໄຖ່.
ຍ. ຄວາມພົ້ນໃນອາດີດ, ປັດຈຸບັນ ແລະ ອະນາຄົດ.

# I. ຫລັກຄວາມເຊື່ອພື້ນຖານກ່ຽວກັບ - ພະເຈົ້າ

## *ກ. ບົດຄຳນຳ*

ໂກໂລຊາຍ 1:9–10 ໂຢຮັນ 17:3 ດານີເອນ 11:32

*ໂຢຮັນ 17:34*
*ນີ້ແຫລະ, ແມ່ນຊີວິດອັນຕະຫລອດໄປເປັນນິດ ຄື ທີ່ເຂົາຮູ້ຈັກພະອົງຜູ້ຊົງເປັນພະເຈົ້າທ່ຽງແທ້ອົງດຽວ ແລະຮູ້ຈັກພະເຢຊູຄຣິດທີ່ພະອົງຊົງໃຊ້ມາ.*

## *ຂ. ການຊົງເປັນຢູ່ຂອງພະເຈົ້າ*

ເຮັບເຣີ 11:6 ປະຖົມມະການ 1:1

*ເຮັບເຣີ 11:6*
*ແຕ່ຖ້າບໍ່ມີຄວາມເຊື່ອແລ້ວ ຈະເປັນທີ່ພໍພະໄທພະເຈົ້າບໍ່ໄດ້ ເພາະວ່າ ຜູ້ທີ່ມາເຝົ້າພະເຈົ້າໄດ້ ນັ້ນຕ້ອງເຊື່ອວ່າ ພະອົງຊົງພະຊົນຢູ່ ແລະພະອົງຊົງເປັນຜູ້ປະທານລາງວັນໃຫ້ແກ່ທຸກຄົນທີ່ ສະແຫວງຫາພະອົງ.*

1. **ຄວາມເຊື່ອ**ເລື່ອງພະເຈົ້າຂອງຄົນທົ່ວໂລກ ແມ່ນມາຈາກພາຍໃນເຮົາເອງ.

   ໂຣມ 1:18–32

   *ໂຣມ 1:21*
   *ເພາະເຖິງແມ່ນວ່າເຂົາທັງຫລາຍໄດ້ຮູ້ຈັກພະເຈົ້າ ເຂົາກໍບໍ່ໄດ້ຖວາຍພະກຽດແກ່ພະອົງໃຫ້ສົມກັບການຊົງເປັນພະເຈົ້າ ທັງບໍ່ໄດ້ໂມທະນາພະຄຸນ ແຕ່ວ່າຄວາມຄິດຂອງເຂົາກາຍເປັນສິ່ງທີ່ເສຍປະໂຫຍດ ແລະໃຈໂງ່ຂອງເຂົາກໍມືດມົວໄປ.*

2. ດ້ວຍຄຳໂຕ້ແຍ້ງຈາກ **"ເຫດແລະຜົນ"** ທຸກຢ່າງທີ່ເປັນຢູ່ດຽວນີ້ ລ້ວນແຕ່ມີຜູ້ສ້າງມັນມາທັງນັ້ນ. ພວກເຮົາມີໂມງໃຊ້; ກໍສະແດງວ່າ ຕ້ອງມີຄົນເຮັດໂມງດ້ວຍ - ພວກເຮົາມີການສ້າງ; ສະແດງວ່າ ຕ້ອງມີຄົນສ້າງເຮົາມາຄືກັນ. ສິ່ງຖືກສ້າງຈະບໍ່ສາມາດເກີດມາໄດ້ ຫາກປາສະຈາກຜູ້ສ້າງທີ່ສະຫລາດຫລັກແຫລມ.

3. **ສິນທຳ**ແລະ**ປັນຍາ**ໂດຍທຳມະຊາດຂອງມະນຸດຂັດແຍ້ງກັບສິນທຳແລະພະປັນຍາຂອງພະຜູ້ສ້າງ.

4. **ເພງສັນລະເສີນ 14:1** ຄົນໂງ່ຈ້າຄິດຢູ່ໃນໃຈຂອງຕົນວ່າ, "ໂລກນີ້ບໍ່ມີພະເຈົ້າ."

## *ຄ. ຄວາມເປັນເຈົ້າຂອງພະເຈົ້າ*

***ແມ່ນຫຍັງທີ່ເຮັດໃຫ້ພະເຈົ້າ ເປັນພະເຈົ້າ?*** *ບໍ່ມີຂອບເຂດ - ບໍ່ຊົງມີຄວາມຈຳກັດ.*

GCI

1. **ຊົງເປັນຢູ່ຕະຫລອດໄປເປັນນິດ** ບໍ່ມີຂີດຈຳກັດເລື່ອງເວລາ.

*1ຕີໂມທຽວ 1:17 ພະກຽດແລະພະລັດສະໝີຈົ່ງມີແກ່ພະມະຫາກະສັດ, ຜູ້ຊົງພະຈະເລີນຢູ່ເປັນນິດ, ຜູ້ຊົງເປັນອົງອຳມະຕະ, ຊຶ່ງບໍ່ໄດ້ປາກົດພະອົງ, ຜູ້ຊົງເປັນພະເຈົ້າ ແຕ່ອົງດຽວສືບໆໄປເປັນນິດ ອາແມນ.*

2. **ມີອຳນາດສູງສຸດ** ບໍ່ຊົງມີຂີດຈຳກັດເລື່ອງອຳນາດລິດເດດ.

ຊົງເປັນພະຜູ້ສ້າງ ແລະ ໃຫ້ສິ່ງທັງປວງເຫລົ່ານີ້ດຳລົງຢູ່ໄດ້.

ກ) **ປະຖົມມະການ 17:1** ເອລ ຊັດດາຍ → ພະເຈົ້າອົງຊົງລິດອຳນາດຍິ່ງໃຫຍ່

*ເມື່ອອັບລາມອາຍຸໄດ້ເກົ້າສິບເກົ້າປີ ພະຜູ້ເປັນເຈົ້າໄດ້ປາກົດແກ່ເພິ່ນ ແລະ ກ່າວວ່າ "ເຮົາເປັນພະເຈົ້າອົງຊົງລິດອຳນາດຍິ່ງໃຫຍ່. ຈົ່ງເຊື່ອຟັງເຮົາ ແລະ ປະພຶດແຕ່ສິ່ງທີ່ຊອບທຳ."*

ຂ) **ອົບພະຍົບ 3:14** ຢາຫ໌ເວ ເປັນຄຳທຳອິດທີ່ຖືກໃຊ້ເອີ້ນພະເຈົ້າວ່າເປັນ ພະຜູ້ສ້າງ (ປະຖົມມະການ 2:4)
ເອຊາຢາ 41:4; 43:10–13; 44:6; 48:12

ຄ) **ປະຖົມມະການ 18:14** "ມີຫຍັງແດ່ ທີ່ຍາກ ສຳຫລັບພະຜູ້ເປັນເຈົ້າຫລື?"

ງ) **ມັດທາຍ 19:26** ". . . ແຕ່ຝ່າຍພະເຈົ້າຊົງເຮັດໄດ້ທຸກສິ່ງ"

ຈ) **ພະນິມິດ 19:6** ພະນິມິດ 1:8 ເອຊາຢາ 42:5; 45:12,18; 48:13

*6 ແລ້ວຂ້າພະເຈົ້າໄດ້ຍິນເໝືອນສຽງຄົນຈຳນວນຫລວງຫລາຍ, ເໝືອນສຽງນ້ຳ ຫລາຍ ແລະ ເໝືອນຟ້າຮ້ອງສຽງແຮງກ້າວ່າ, "ອາເລລູຢາ ເພາະວ່າອົງພະຜູ້ເປັນເຈົ້າ ພະເຈົ້າຂອງພວກເຮົາ ຜູ້ຊົງລິດທານຸພາບອັນສູງສຸດ ໄດ້ຊົງຂຶ້ນສະ ເຫວີຍລາດແລ້ວ."*

2. **ຊົງຮູ້ທຸກຢ່າງ** ພະອົງບໍ່ຊົງມີຂີດຈຳກັດໃນເລື່ອງຂອງຄວາມຮູ້, ພະສະຕິປັນຍາ ຫລື ຄວາມສະຫລາດ

ເອຊາຢາ 46:9–10; 40:28 ເພງສັນລະເສີນ 147:5 ໂຣມ 11:33

*ໂຣມ 11:33*
*33 ໂອ, ຊັບສົມບັດຂອງພະເຈົ້າມີຫລວງຫລາຍປານໃດນໍ ພະປັນຍາທັງຄວາມຮອບຮູ້ຂອງພະອົງກໍເລິກລັບເທົ່າໃດ. ຂໍ້ຕັດສິນຂອງພະອົງນັ້ນກໍເຫລືອທີ່ຈະຢັ່ງຮູ້ໄດ້ ແລະ ວິທີທາງຂອງພະອົງກໍເຫລືອວິໄສທີ່ຈະຄົ້ນຄວ້າໄດ້.*

4. **ຊົງສະຖິດຢູ່ທຸກຫົນແຫ່ງ** ພະອົງບໍ່ຊົງມີຂີດຈຳກັດເລື່ອງໄລຍະທາງ ແລະ ເວລາ.

ເພງສັນລະເສີນ 139:7–10 ເຮັບເຣີ 4:13

*ເຮັບເຣີ 4:13*
*13ໃນທຸກສິ່ງທີ່ສ້າງຂຶ້ນນັ້ນ ບໍ່ມີສິ່ງໃດບັງລັບໄວ້ຈາກພະພັກຂອງພະອົງ ແຕ່ທຸກສິ່ງໄດ້ ປາກົດແຈ້ງຕໍ່ພະເນດຂອງພະອົງ ຜູ້ທີ່ເຮົາຈະຕ້ອງໃຫ້ການນັ້ນ.*

GCI

5. ຊົງເປັນຜູ້ປົກຄອງຈັກກະວານນີ້ດ້ວຍ**ຊອບທຳ.**

ກ) **ປະຖົມມະການ 14:19** ເອລ ເອລຢອນ → "ອົງຍິ່ງໃຫຍ່ ແລະ ສູງສຸດ ຜູ້ສ້າງໂລກ ມະນຸດເຮົາ ທັງສະຫວັນຊັ້ນຟ້າ."

ຂ) **ເພງສັນລະເສີນ 103:19** ເອຊາຢາ 45:21; 46:9-10

*ເພງສັນລະເສີນ 103:19*
*19 ພະເຈົ້າຕັ້ງພະບັນລັງໄວ້ຢູ່ໃນຟ້າສະຫວັນ,*
*ຊົງເປັນເຈົ້າຊີວິດປົກຄອງເໜືອສັບພະສິ່ງ.*

6. ຊົງມີຊີວິດ**ນິລັນ** ແລະ ເປັນບໍ່ເກີດແຫ່ງຊີວິດບ່ອນດຽວ.

ໂຢຮັນ 1:4; 5:26 ກິດຈະການ 17:25 ເອຊາຢາ 42:5

*ກິດຈະການ 17:25*
*25 ພະອົງບໍ່ຈຳເປັນໃຫ້ມະນຸດປະຕິບັດພະອົງ ເໝືອນວ່າ ຊົງມີພະປະສົງສິ່ງໜຶ່ງສິ່ງໃດ ເພາະພະອົງນີ້ແຫລະ, ຊົງເປັນຜູ້ປະທານຊີວິດ, ລົມຫັນໃຈ ແລະ ສິ່ງສາລະພັດແກ່ຄົນທັງປວງ.*

7. **ບໍ່ຊົງປ່ຽນແປງຈັກເທື່ອ** ພະອົງບໍ່ຊົງປ່ຽນແປງ. ບໍ່ຊົງມີຂີດຈຳກັດໃນຄວາມສົມບູນແບບ.

ມາລາກີ 3:6; 1ຊາມູເອນ 15:29; ເຮັບເຣີ 1:10-12; ຢາໂກໂບ 1:17

*ມາລາກີ 3:6*
*"ເຮົາແມ່ນພະຜູ້ເປັນເຈົ້າແລະເຮົາບໍ່ປ່ຽນແປງ. ສ່ວນພວກເຈົ້າ ເຊື້ອສາຍຂອງຢາໂຄບ ຍັງບໍ່ສູນສິ້ນໄປໝົດເທື່ອນໍ."*

## *ງ. ທຳມະຊາດ ແລະ ພະລັກສະນະຂອງພະເຈົ້າ. ພະອົງເປັນຢ່າງໃດ?*

**ພວກເຮົາຕ້ອງເປັນເໝືອນພະອົງ, "ເພາະຖືກສ້າງມາຕາມພະລັກສະນະຂອງພະອົງ."**

**ເອເຟໂຊ 4:24 ໂກໂລຊາຍ 3:10 ໂຣມ 8:29 1ໂຢຮັນ 3:2**

**ອຟຊ 4:24**
**24 ແລະໃຫ້ທ່ານທັງຫລາຍສວມສະພາບມະນຸດໃໝ່ ຊຶ່ງຊົງສ້າງຂຶ້ນໃໝ່ຕາມແບບພະລັກສະນະ ຂອງພະເຈົ້າ ໃນຄວາມຊອບທຳ ແລະ ຄວາມບໍລິສຸດທີ່ແທ້ຈິງ.**

| | | | |
|---|---|---|---|
| 1. | ພະເຈົ້າຊົງເປັນ**ຄວາມຮັກ** | 1ໂຢຮັນ 4:8<br>ເອເຟໂຊ 5:15 | ມັດທາຍ 5:44-45, 48 |
| 2. | ພະເຈົ້າຊົງເປັນ**ຄວາມສະຫວ່າງ** | 1ໂຢຮັນ 1:5, 7 | ເອເຟໂຊ 5:8 |
| 3. | ພະເຈົ້າຊົງ**ບໍລິສຸດ** | ລະບຽບພວກເລວີ 11:45; 19:2 | 1ເປໂຕ 1:1416 |
| 4. | ພະເຈົ້າຊົງ**ທ່ຽງທຳ** | ໂຣມ 3:26<br>ລະບຽບພວກເລວີ 19:35-36 | 1ເປໂຕ 3:18<br>ສຸພາສິດ 11:1 |

GCI

| | | |
|---|---|---|
| 5. | ພະເຈົ້າຊົງ**ດີ** | ນາຮູມ 1:7 ເພງສັນລະເສີນ 25:8 ລູກາ 18:19 ເອເຟໂຊ 5:9 |
| 6. | ພະເຈົ້າຊົງເປັນ**ຄວາມຈິງ** | ອົບພະຍົບ 34:6 ໂຢຮັນ 14:6 ເອເຟໂຊ 4:25 |
| 7. | ພະເຈົ້າຊົງເປັນ**ນັກຮົບ** | ອົບພະຍົບ 15:3; 14:14 ເອຊາຢາ 42:13 ພະນິມິດ 19:11 |
| 8. | ຊົງເປັນ**ໄຟ**ເຜົາໄໝ້ | ລະບຽບພວກເລວີ 10:2 1ໂກຣິນໂທ 3:1 ເຮັບເຣີ 12:29 |
| 9. | ພະເຈົ້າຊົງ**ສົມບູນແບບ** | ມັດທາຍ 5:48 |
| 10. | ພະເຈົ້າຊົງເປັນພະວິນຍານ | ໂຢຮັນ 4:24 ໂຣມ 8:45, 14 |

**ຄຳຖາມ : ຖ້າພະເຈົ້າຊົງເປັນຄວາມຮັກ, ແລ້ວເປັນຫຍັງຈຶ່ງປ່ອຍຄົນໃຫ້ຕົກນາລົກ?**
**ຄຳຕອບ : ເນື່ອງຈາກວ່າ ພະເຈົ້າຊົງບໍລິສຸດຢ່າງແທ້ຈິງ, ແລ້ວພະອົງຈະໃຫ້ຄົນ (ບາບ) ຂຶ້ນສະຫວັນໄດ້ຫລື?**

ພະເຈົ້າຜູ້ຊົງບໍລິສຸດ ແລະ ທ່ຽງທຳ ຈະເບິ່ງຂ້າມຄວາມຜິດບາບໄດ້ຢ່າງໃດ?
ແລ້ວພະເຈົ້າຜູ້ຊົງຄວາມຮັກ ຈະບໍ່ສາມາດໃຫ້ອະໄພໄດ້ຫລື?

ຄວາມບໍລິສຸດທີ່ບໍ່ສາມາດປ່ຽນແປງ ແລະ ຄວາມຮັກທີ່ບໍ່ມີເງື່ອນໄຂ ຕ້ອງຂັດແຍ້ງກັນແລ້ວ.

ຄວາມຍິ່ງໃຫຍ່ຂອງພະອົງໄດ້ສະແດງອອກໂດຍການທີ່ພະອົງຊົງໃຫ້ອະໄພ.

ຄວາມຮັກຂອງພະອົງໄດ້ສະແດງອອກ – ທັງຄວາມຊອບທຳແລະຄວາມບໍລິສຸດກໍພໍພະໄທນຳ

## *ຈ. ພະລັກສະນະສະເພາະຂອງພະເຈົ້າ - ຄວາມແຕກຕ່າງຂອງພະອົງ*

1ເທຊະໂລນິກ 1:9 ". . . . ພະເຈົ້າຜູ້ຊົງພະຊົນຢູ່ ແລະ ທ່ຽງທຳ."

| | | |
|---|---|---|
| 1. | ພະເຈົ້າຊົງ**ຮັກ** | ມັດທາຍ 5:44–45 |
| 2. | ພະເຈົ້າຊົງ**ກຽດຊັງ** | ສຸພາສິດ 6:16 |
| 3. | ພະເຈົ້າຊົງ**ຫ່ວງໄຍ** | 1ເປໂຕ 5:7 |
| 4. | ພະເຈົ້າຊົງ**ເສຍໃຈ** | ປະຖົມມະການ 6:6 |
| 5. | ພະເຈົ້າຊົງຫວງແຫນ | ອົບພະຍົບ 34:14 |
| 6. | ພະເຈົ້າຊົງ**ຄວາມສົງສານ** | ພະບັນຍັດສອງ 4:31 2 ໂກຣິນໂທ 1:34 ເພງຄ່ຳຄວນ 3:22 |

GCI

| | | |
|---|---|---|
| 7. | ພະເຈົ້າຊົງ**ຄວາມເມດຕາ** | 2ໂກຣິນໂທ 1:3 ເອເຟໂຊ 2:4<br>ລູກາ 6:36 |
| 8. | ພະເຈົ້າຊົງ**ພະກະລຸນາ** | ລູກາ 6:35 |
| 9. | ພະເຈົ້າຊົງ**ຄວາມສັດຊື່** | 1ໂກຣິນໂທ 1:9; 10:13<br>1ເທຊະໂລນິກ 5:24 ເຮັບເຣີ 10:23 |
| 10. | ພະເຈົ້າຊົງ**ເປັນຜູ້ໃຫ້** | ໂຢຮັນ 3:16; ລູກາ 11:13;<br>ໂຣມ 6:23; 1ເປໂຕ 5:5;<br>ມັດທາຍ 11:28; ຢາໂກໂບ 1:5;<br>1ໂກຣິນໂທ 15:57; ເພງສັນລະເສີນ 136:25 |

## *ສ. ພະເຈົ້າຊົງຕຣີເອກະນຸພາບ*

1. ໃນສາມພະພາບຂອງພະເຈົ້ານີ້ ພວກເຮົາໝາຍເຖິງພະເຈົ້າ**ອົງດຽວ** (ພະບັນຍັດສອງ 6:4) ແລ້ວໄດ້ຊົງປາກົດອອກເປັນ ສາມ ພະພາກ ໄດ້ແກ່ ພະບິດາ, ພະບຸດ ແລະ ພະວິນຍານບໍລິສຸດ (ເອເຟໂຊ 4:4-6). ພະອົງຊົງມີຄວາມຄິດຢ່າງດຽວ, ມີຈຸດປະສົງ, ການກະທຳ ແລະພະລາຊະກິດອັນດຽວກັນ.

   *ພະບັນຍັດສອງ 6:4*
   *4 "ຊາວອິສະຣາເອນເອີຍ ຈົ່ງຈຳໄວ້ໃຫ້ດີ! ພະຜູ້ເປັນເຈົ້າ ແລະ ພະຜູ້ເປັນເຈົ້າແຕ່ອົງດຽວເທົ່ານັ້ນເປັນພະເຈົ້າຂອງພວກເຮົາ!"*

   *ເອເຟໂຊ 4:46*
   *ມີກາຍດຽວ ແລະ ມີພະວິນຍານອົງດຽວ ເໝືອນມີຄວາມຫວັງໃຈອັນດຽວທີ່ເນື່ອງໃນ ການທີ່ຊົງເອີ້ນເອົາພວກທ່ານແລ້ວນັ້ນ; 5 ມີອົງພະຜູ້ເປັນເຈົ້າອົງດຽວ, ມີຄວາມເຊື່ອດຽວ, ມີບັບຕິສະມາດຽວ.*

2. **ພະບິດາ** ຊົງຖືກຮັບຮູ້ວ່າເປັນພະເຈົ້າ (1ເປໂຕ 1:2) ແລະ ຊົງເປັນພະເຈົ້າທີ່ບໍ່ມີໃຜເຫັນໄດ້ (ໂຢຮັນ1:18).

   *1ເປໂຕ 1:2*
   *2 ຄືຜູ້ທີ່ພະເຈົ້າພະບິດາໄດ້ຊົງເລືອກໄວ້ແລ້ວ ຕາມທີ່ພະອົງໄດ້ຊົງຮູ້ລ່ວງໜ້າໄວ້ກ່ອນ ເພື່ອພະວິນຍານຈະຊົງຊຳລະໃຫ້ບໍລິສຸດ, ຈະໃຫ້ນົບນ້ອມເຊື່ອຟັງພະເຢຊູຄຣິດ, ແລະຈະໃຫ້ຮັບການຊຶດດ້ວຍພະໂລຫິດຂອງພະອົງ. ຂໍພະຄຸນ ແລະ ສັນຕິສຸກຈົ່ງບັງເກີດທະວີຄູນແກ່ທ່ານທັງຫລາຍເທີນ.*

   *ໂຢຮັນ 1:17-18*
   *ບໍ່ມີໃຜໄດ້ເຫັນພະເຈົ້າຈັກເທື່ອ ແຕ່ພະບຸດອົງດຽວ ຜູ້ຊົງເປັນພະເຈົ້າ ຊຶ່ງຊົງສະຖິດຢູ່ໃນພະຊວງຂອງພະບິດາ ພະອົງນັ້ນແຫລະ, ໄດ້ຊົງສະແດງໃຫ້ຮູ້.*

3. **ພະບຸດ** ຊົງຖືກຮັບຮູ້ວ່າ ເປັນພະເຈົ້າ (ເຮັບເຣີ 1:8) ແລະ ຊົງເປັນພະເຈົ້າທີ່ມາບັງເກີດເປັນມະນຸດ (ໂຢຮັນ 1:1, 14).

   ***ເຮັບເຣີ 1:8***
   *8ແຕ່ສ່ວນພະບຸດນັ້ນພະອົງຊົງກ່າວວ່າ, "ຂ້າແດ່ພະຜູ້ເປັນເຈົ້າ, ລາຊະບັນລັງຂອງ ພະອົງກໍຕັ້ງຢູ່ເປັນນິດຕະຫລອດໄປ. ພະຄະທາແຫ່ງລາຊະອານາຈັກຂອງພະອົງກໍ ເປັນພະຄະທາອັນທ່ຽງທຳ."*

***ໂຢຮັນ 1:14***
*ພະທຳໄດ້ຊົງບັງເກີດເປັນມະນຸດ ແລະ ຊົງອາໃສຢູ່ທ່າມກາງເຮົາທັງຫລາຍບໍລິບູນດ້ວຍ ພະຄຸນແລະຄວາມຈິງ ເຮົາທັງຫລາຍໄດ້ເຫັນສະງ່າລາສີຂອງພະອົງ ຄືສະງ່າລາສີອັນ ສົມກັບພະບຸດອົງດຽວຂອງພະບິດາ.*

4. **ພະວິນຍານບໍລິສຸດ** ຊົງຖືກຮັບຮູ້ວ່າ ເປັນພະເຈົ້າ (ກິດຈະການ 5:3–4) ແລະ ຊົງເປັນພະຜູ້ຊົງກະທຳການເໜືອມະນຸດທັງຫລາຍ, ຜູ້ຕັກເຕືອນເລື່ອງການບາບຂອງເຂົາ (ໂຢຮັນ 16:7–11) ແລະ ຊົງນຳພາຜູ້ທີ່ເຊື່ອເຂົ້າເຖິງຄວາມຈິງທັງປວງ (ໂຢຮັນ 16:12–15).

*ກິດຈະການ 5:34*
*3 ຝ່າຍເປໂຕຈຶ່ງຖາມວ່າ, "ອານາເນຍເອີຍ, ດ້ວຍເຫດໃດໃຈຂອງເຈົ້າເຕັມໄປດ້ວຍຊາຕານ ເຈົ້າຈຶ່ງຕົວະຕໍ່ພະວິນຍານບໍລິສຸດ ແລະ ໄດ້ມ້ຽນຄ່າທີ່ດິນນັ້ນໄວ້ສ່ວນໜຶ່ງ 4 ເມື່ອດິນນັ້ນບໍ່ທັນໄດ້ຂາຍກໍເປັນຂອງເຈົ້າ ບໍ່ແມ່ນຫລື ແລະ ເມື່ອຂາຍແລ້ວ ເງິນນັ້ນກໍຢູ່ໃນອຳ ນາດຂອງພະເຈົ້າ ບໍ່ແມ່ນຫລື. ມີເຫດໃດເກີດຂຶ້ນຈຶ່ງເຮັດໃຫ້ເຈົ້າຄິດດັ່ງນີ້ໃນໃຈ ທີ່ເຈົ້າໄດ້ຕົວະນັ້ນບໍ່ແມ່ນຕົວະມະນຸດແຕ່ຕົວະຕໍ່ພະເຈົ້າ."*

5. ຫລັກຄວາມເຊື່ອເລື່ອງການຕຣີເອກະນຸພາບບໍ່ເປັນທີ່**ແຈ່ມແຈ້ງ**ໃນພະຄຳພີເດີມ, ແຕ່ມີຂໍ້ທີ່ກ່າວໄວ້ດັ່ງນີ້, "ແລ້ວພະເຈົ້າກໍກ່າວວ່າ, ບັດນີ້ ເຮົາຈະສ້າງມະນຸດ . . . " (ຄຳວ່າ "ເຮົາ" ໃນທີ່ນີ້ໝາຍເຖິງຈຳນວນຫລາຍ ຄື ມີສອງຄົນຂຶ້ນໄປ) (ປະຖົມມະການ 1:26).

*ປະຖົມມະການ 1:26*
*26 ແລ້ວພະເຈົ້າກໍກ່າວວ່າ, "ບັດນີ້, ເຮົາຈະສ້າງມະນຸດໃຫ້ຄ້າຍຄືເຮົາ; ເຂົາຈະມີອຳນາດເໜືອປາ, ນົກ, ສັດທັງໝົດ, ບໍ່ວ່າສັດລ້ຽງ ຫລືສັດປ່າ. ສັດໃຫຍ່ ຫລືສັດນ້ອຍກໍດີ."*

6. ຫລັກຄວາມເຊື່ອເລື່ອງການຕຣີເອກະນຸພາບ ໄດ້ຖືກເປີດເຜີຍອອກໃນ**ພະຄຳພີໃໝ່.** ໃນພະທຳມັດທາຍ 3:16–17, ພວກເຮົາຈະເຫັນຕອນທີ່ພະເຢຊູຊົງຮັບບັບຕິສະມາໃນນ້ຳ, ພະບິດາຊົງກ່າວຈາກສະຫວັນ ແລະພະວິນຍານບໍລິສຸດກໍລົງມາສະຖິດຢູ່ເໜືອພະ ອົງ. ພວກເຮົາຈຶ່ງຮັບບັບຕິສະມາໃນພະນາມດຽວກັນ ຄື "ພະນາມແຫ່ງພະບິດາ, ພະບຸດ ແລະ ພະວິນຍານບໍລິສຸດ." (ມັດທາຍ 28:19).

## *ຂ. ພະນາມຂອງພະເຈົ້າ*

| | | | |
|---|---|---|---|
| 1. | ເອໂລຮິມ (ຈຳນວນຫຼາຍ) | **ພະເຈົ້າ** ປະຖົມມະການ 1:1 | |
| 2. | ເອລ ເອລຢອນ | **ພະເຈົ້າອົງສູງສຸດ** | ປະຖົມມະການ 14:18 |
| 3. | ເອລ ກິບບໍ | **ພະເຈົ້າອົງຊົງລິດທາ** | ເອຊາຢາ 9:6; ພະບັນຍັດສອງ 10:17 |
| 4. | ເອລ ຊັດດາຍ | **ພະເຈົ້າອົງຊົງລິດອຳນາດຍິ່ງໃຫຍ່** | ປະຖົມມະການ 17:1–2<br>ອົບພະຍົບ 6:2 |
| 5. | ເອລ ໂອລາມ | **ພະເຈົ້າຜູ້ດຳລົງຢູ່ເປັນນິດ** | ປະຖົມມະການ 21:33 |

| | | | |
|---|---|---|---|
| 6. | ຢາຫ໌ເວຫ໌ | **ອົງພະຜູ້ເປັນເຈົ້າ** | ອົບພະຍົບ 3:14; 6:23; ເອຊາຢາ 42:8 |
| | | ຄໍາວ່າ YHWH ຫລື YAHWEH ແມ່ນມີເຄົ້າມາຈາກຄໍາ ວ່າ ຮາຢາ (HAYAH) "ເປັນຢູ່" ຫລື "ເຮົາເປັນ" | |
| 7. | ຢາຫ໌ເວຫ໌ ໂຣອີ | **ພະຜູ້ເປັນເຈົ້າເປັນຜູ້ລ້ຽງຂ້າພະອົງ** | ເພງສັນລະເສີນ 23:1 |
| 8. | ຢາຫ໌ເວຫ໌ ເມເລັກ | **ພະຜູ້ເປັນເຈົ້າເປັນກະສັດຂອງຂ້າພະອົງ** | ເອຊາຢາ 6:5 |
| 9. | ຢາຫ໌ເວຫ໌ ຊາບາອົດ | **ພະຜູ້ເປັນເຈົ້າແຫ່ງເຫລົ່າທູດສະຫວັນ** | ເອຊາຢາ 6:3 |
| 10. | ຢາຫ໌ເວຫ໌ ຈີເຣຫ໌ | **ພະຜູ້ເປັນເຈົ້າຜູ້ຈັດຫາໃຫ້** | ປະຖົມມະການ 22:14 |
| 11. | ຢາຫ໌ເວຫ໌ ນິສຊີ | **ພະຜູ້ເປັນເຈົ້າເປັນທຸງໄຊຂອງຂ້ອຍ** | ອົບພະຍົບ 17:15 |
| 12. | ຢາຫ໌ເວຫ໌ ໂຣເປ | **ພະຜູ້ເປັນເຈົ້າຜູ້ປິ່ນປົວຂອງຂ້າພະອົງ** | ອົບພະຍົບ 15:26 |
| 13. | ຢາຫ໌ເວຫ໌ ຊາໂລມ | **ພະຜູ້ເປັນເຈົ້າອົງແຫ່ງສັນຕິສຸກ** | ພວກຜູ້ປົກຄອງ 6:24 |
| 14. | ຢາຫ໌ເວຫ໌ ຊາມມາ | **ພະຜູ້ເປັນເຈົ້າສະຖິດຢູ່ທີ່ນີ້** | ເອເສກຽນ 48:35 |
| 15. | ຢາຫ໌ເວຫ໌ ສິດເກນູ (Tsidkenu) | **ພະຜູ້ເປັນເຈົ້າເປັນຄວາມພົ້ນຂອງຂ້າພະອົງທັງຫລາຍ** | ເຢເຣມີຢາ 23:6 |
| 16. | ອະໂດນາຍ | **ອົງພະຜູ້ເປັນເຈົ້າ / ເຈົ້ານາຍ** | ປະຖົມມະການ 15:2 |

# II ຫລັກຄວາມເຊື່ອພື້ນຖານກ່ຽວກັບ - ມະນຸດ

## *ກ. ຕົ້ນເດີມຂອງມະນຸດ*

ມະນຸດມາຈາກໃສ?
ປະຖົມມະການ 1:26-28; 2:7, 18, 21-25

*ປະຖົມມະການ 1:26-28*
*26 ແລ້ວພະເຈົ້າກໍກ່າວວ່າ, "ບັດນີ້ ເຮົາຈະສ້າງມະນຸດໃຫ້ຄ້າຍຄືເຮົາ; ເຂົາຈະມີອໍານາດເໜືອ ປາ, ນົກ, ສັດທັງໝົດ; ບໍ່ວ່າສັດລ້ຽງຫລືສັດປ່າ, ສັດໃຫຍ່ຫລືວ່າສັດນ້ອຍກໍດີ." 27 ດັ່ງນັ້ນ ພະເຈົ້າຈຶ່ງສ້າງມະນຸດໃຫ້ຄ້າຍຄືພະອົງ. ພະອົງສ້າງເຂົາໃຫ້ເປັນຊາຍແລະຍິງ. 28 ແລ້ວກໍອວຍໄຊໃຫ້ພວກເຂົາວ່າ, "ຈົ່ງມີລູກເຕົ້າໃຫ້ມາກຫລາຍ ເພື່ອເຊື້ອສາຍຂອງເຈົ້າຈະມີຢູ່ທົ່ວທຸກແຫ່ງຫົນ ແລະປົກຄອງທຸກສິ່ງເທິງແຜ່ນດິນໂລກນີ້. ເຮົາໃຫ້ເຈົ້າມີອໍານາດເໜືອປາ, ນົກ ແລະ ສັດປ່າທຸກ ຊະນິດ."*

GCI

## *ຂ. ສະພາບຂອງມະນຸດເມື່ອຖືກຊົງສ້າງຂຶ້ນຕອນທຳອິດ*

1. **ຄວາມສົມບູນແບບ:**

ກ) ບໍ່ມີຄວາມບາບ, ການເຈັບເປັນ ຫລື ຄວາມຕາຍ, ເປັນຢູ່ຕະຫລອດໄປເປັນນິດ.

ຂ) ໄດ້ດຳເນີນໄປກັບພະເຈົ້າ. **ປະຖົມມະການ 1:31; 3:8**

2. ຖືກສ້າງຂຶ້ນມາຕາມ**ພະລັກສະນະ**ຂອງພະເຈົ້າ ຫລື ເປັນແບບພະເຈົ້າ

ກ) ມີຄວາມຮູ້ **ຄວາມສະຫລາດ**ສູງຫລາຍ. ໂກໂລຊາຍ 3:10

*ໂກໂລຊາຍ 3:10*
*ແລະໄດ້ສວມສະພາບມະນຸດໃໝ່ທີ່ກຳລັງຊົງສ້າງຂຶ້ນໃໝ່ຢູ່ສະເໝີ ໃຫ້ເຖິງ ຄວາມຮູ້ຈັກພະເຈົ້າ ຢ່າງຄົບຖ້ວນຕາມພະລັກສະນະຂອງພະອົງຜູ້ຊົງສ້າງ ຂຶ້ນນັ້ນ.*

ຂ) **ສິນທຳ** ແລະ **ຄວາມຊອບທຳ** ຮູ້ ແລະ ເຮັດແຕ່ສິ່ງທີ່ດີເທົ່ານັ້ນ.

*ເອເຟໂຊ 4:24*
*24 ແລະໃຫ້ທ່ານທັງຫລາຍສວມສະພາບມະນຸດໃໝ່ ຊຶ່ງຊົງສ້າງຂຶ້ນໃໝ່ຕາມ ແບບລັກສະນະຂອງພະເຈົ້າ ໃນຄວາມຊອບທຳແລະຄວາມບໍລິສຸດທີ່ແທ້ຈິງ.*

ຄ) **ມີເສລີພາບ**. ສາມາດເລືອກໄດ້ຕາມໃຈມັກ. ປະຖົມມະການ 2:16–17

*16 ພະອົງສັ່ງລາວວ່າ, "ໝາກໄມ້ທຸກກົກໃນສວນນີ້ເຈົ້າກິນໄດ້; 17 ເວັ້ນໄວ້ແຕ່ຕົ້ນທີ່ໃຫ້ຮູ້ຈັກດີແລະຮູ້ຈັກຊົ່ວ. ເຈົ້າຢ່າກິນໝາກໄມ້ໃນຕົ້ນນັ້ນ; ຖ້າເຈົ້າຫາກຂືນ ກິນເມື່ອໃດ ເຈົ້າຈະຕາຍເມື່ອນັ້ນ."*

ງ) ເປັນຢູ່**ນິລັນດອນ.**

3. **ສາມ**ສ່ວນປະກອບຂອງການມີຊີວິດ: ວິນຍານ – ຈິດໃຈ – ຮ່າງກາຍ.

ກ) **ປະຖົມມະການ 2:7** ຮ່າງກາຍຖືກສ້າງມາຈາກຂີ້ຝຸ່ນດິນ. ວິນຍານ ແລະ ຈິດໃຈ ແມ່ນມາຈາກລົມຫາຍໃຈ (ພະວິນຍານ) ຂອງພະເຈົ້າ.

ຂ) **1ເທຊະໂລນິກ 5:23**

*1ເທຊະໂລນິກ 5:23–24*
*23 ຂໍໃຫ້ພະເຈົ້າຜູ້ຊົງໂຜດປະທານສັນຕິສຸກນັ້ນ ຈົ່ງຊົງບັນດານໃຫ້ເຈົ້າທັງຫຼາຍ ເປັນຄົນບໍລິສຸດຮຽບຮ້ອຍ ແລະ ຊົງຮັກສາວິນຍານ, ຈິດໃຈ, ແລະ ກາຍຂອງພວກເຈົ້າໄວ້ບໍ່ໃຫ້ມີຂໍ້ຕິຕຽນໄດ້ໃນເມື່ອອົງພະຜູ້ເປັນເຈົ້າຂອງເຮົາທັງຫລາຍ ຄື ພະເຢຊູຄຣິດຈະສະເດັດມາປາກົດ.*

GCI

## *ຄ. ເປັນຫຍັງພະເຈົ້າຈຶ່ງສ້າງມະນຸດຂຶ້ນມາ?*

1. ຖືກສ້າງຂຶ້ນມາເພື່ອໃຫ້**ຖວາຍພະກຽດ**ແກ່ພະອົງ — ເອຊາຢາ 43:7
2. ຖືກສ້າງຂຶ້ນມາເພື່ອເຮັດໃຫ້ເປັນທີ່**ຊອບພະໄທ**ພະອົງ — ພະນິມິດ 4:11
3. ເພື່ອໃຫ້**ສັນລະເສີນ** ແລະ **ນະມັດສະການ**ພະອົງ — ເອເຟໂຊ 1:12 ພະນິມິດ 5:13–14
4. ເພື່ອໃຫ້ເປັນ**ບຸດ**, ເປັນຄອບຄົວຂອງພະອົງ ພະອົງຊົງເປັນພະບິດາ — ໂຢຮັນ 1:12; ເອເຟໂຊ 3:14–16; ເອເຟໂຊ 4:6; ເຮັບເຣີ 2:10–16
5. ເພື່ອ**ພະບຸດ**ຂອງພະອົງ — ໂກໂລຊາຍ 1:16
6. ເພື່ອໃຫ້ເປັນ**ຄຣິສຕະຈັກ**ຂອງພະອົງ — ໂກໂລຊາຍ 1:18
7. ເພື່ອໃຫ້ເປັນ**ເຈົ້າສາວ** ແລະ ເປັນຄູ່ຂອງພະອົງຕະຫຼອດໄປເປັນນິດ — ພະນິມິດ 19:7, 21:2, 9
8. ເພື່ອໃຫ້**ປົກຄອງ**ຢູ່ເໜືອແຜ່ນດິນໂລກນີ້ — ເຮັບເຣີ 2:5–8
9. ເພື່ອໃຫ້ເຮັດ**ການດີຕ່າງໆ** — ເອເຟໂຊ 2:10

## *ງ. ມະນຸດຍັງຮັກສາສະພາບອັນສົມບູນແບບຢ່າງນີ້ໄວ້ບໍ?*

# III. ຫລັກຄວາມເຊື່ອພື້ນຖານກ່ຽວກັບ - ຄວາມບາບ

## *ກ. ຄຳແນະນຳ*

ຄວາມເທັດຈິງສອງປະການ:

ມະນຸດເຮັດບາບ**ໜ້ອຍດຽວ**. — ສຸພາສິດ 14:9 — “ຄົນໂງ່ຈ້າບໍ່ຫົວຊານຳບາບ”
ພະເຈົ້າເຮັດບາບ**ຫລາຍ**. — ປະຖົມມະການ 6:5–7

*5 ເມື່ອພະຜູ້ເປັນເຈົ້າເຫັນວ່າ ມະນຸດຖ່ອຍຮ້າຍຫລາຍ ແລະຄວາມຄິດຊົ່ວກໍຍັງຄັບຈິດໃຈພວກເຂົາຢູ່ທຸກເວລາ. 6 ພະອົງຈຶ່ງເສຍໃຈຫລາຍ 7 ທີ່ໄດ້ສ້າງພວກເຂົາຂຶ້ນມາໃນໂລກ. ພະອົງຊົງກິນແໜງໃຈຢ່າງໃຫຍ່ຫລວງ ຈຶ່ງກ່າວວ່າ, “ເຮົາຈະທຳລາຍມະນຸດເຫລົ່ານີ້ ທີ່ເຮົາໄດ້ສ້າງມາ ພ້ອມກັບສັດທັງປວງແລະນົກຕ່າງໆ ເພາະເຮົາເສຍໃຈ ທີ່ໄດ້ສ້າງພວກເຂົາຂຶ້ນມາ.”*

ເພງສັນລະເສີນ 5:5 — “ຜູ້ທີ່ຊົ່ວຮ້າຍທຸກຄົນ ພະອົງກຽດຊັງທັງນັ້ນ.”

ມັດທາຍ 5:29–30 — ຜິດບາບທີ່ຮ້າຍແຮງ.

GCI

## *ຂ. ຄວາມບາບແມ່ນຫຍັງ?*

1. ຄວາມບາບ ແມ່ນ **ການອັດຂືນ**ຕໍ່ພະບັນຍັດຂອງພະເຈົ້າ 1ໂຢຮັນ 3:4

2. ຄວາມບາບ ຄື **ການຂາດ**ຈາກພະລັດສະໝີຂອງພະເຈົ້າ ໂຣມ 3:23

3. ຄວາມບາບ ແມ່ນ **ການກະບົດ**ຕໍ່ສູ້ພະເຈົ້າ 1ຊາມູເອນ 15:23

4. ຄວາມບາບ ແມ່ນ **ການບໍ່ເຊື່ອ** ຊຶ່ງເປັນການເຮັດໃຫ້ພະເຈົ້າເປັນຜູ້ຕົວະ 1ໂຢຮັນ 5:10

5. ຄວາມບາບ ຄື ການດຳເນີນຊີວິດຕາມ**ວິທີທາງ**ຂອງທ່ານເອງ ເອຊາຢາ 53:6

6. **ການອະທຳ**ທຸກຢ່າງກໍເປັນຜິດບາບໝົດ 1ໂຢຮັນ 5:17

## *ຄ. ບາບແຕ່ຕົ້ນເດີມ*

1. **ເອເສກຽນ 28:11-19**

*ເອເສກຽນ 28:15*
*ການປະພຶດຂອງເຈົ້າຄົບຖ້ວນບໍລິບູນທຸກຢ່າງ ແຕ່ມື້ທີ່ເຈົ້າໄດ້ຖືກສ້າງຂຶ້ນມາ ຈົນກວ່າ ການຊົ່ວຊ້າໄດ້ປາກົດໃນຕົວເຈົ້າ.*

2. **ເອຊາຢາ 14:12-17**

*12 "ກະສັດແຫ່ງບາບີໂລນ ດວງດາວສ່ອງໃສໃນຕອນເຊົ້າເອີຍ ເຈົ້າໄດ້ຕົກລົງຈາກສະ ຫວັນແລ້ວນໍ! ໃນອາດີດເຈົ້ານັ້ນໄດ້ຕີຊະນະຫລາຍໆຊົນຊາດ ແຕ່ມາບັດນີ້ເຈົ້າພັດຖືກ ໂຍນລົງຂີ້ດິນ.*

## *ງ. ຄວາມບາບເຂົ້າມາໃນໂລກນີ້ແນວໃດ*

*ໂຣມ 5:12*
*12 ເຫດສັນນັ້ນ, ຄວາມຜິດບາບໄດ້ເຂົ້າມາໃນໂລກນີ້ເພາະດ້ວຍມະນຸດຄົນດຽວ ແລະ ຄວາມ ຕາຍກໍໄດ້ເກີດມາຍ້ອນຄວາມຜິດບາບນັ້ນ ຢ່າງນັ້ນແຫລະ, ຄວາມຕາຍຈຶ່ງໄດ້ລາມໄປເຖິງມະ ນຸດທຸກຄົນ ເພາະວ່າທຸກຄົນໄດ້ເຮັດບາບແລ້ວ.*

1. ເມື່ອອາດາມເຮັດບາບແລ້ວ ເຊື້ອສາຍຂອງລາວກໍຊົ່ວຊ້າໄປນຳ **ປະຖົມມະການ 3:1-24**

2. ທ່ານບໍ່ຈຳເປັນຕ້ອງສອນລູກໃຫ້ເວົ້າຕົວະກໍໄດ້ **ເພງສັນລະເສີນ 51:5; 58:3**

3. ມະນຸດທັງໝົດຖືກຕັດສິນວ່າ ເປັນຄົນບາບ **ໂຣມ 5:18**

4. ທຸກຄົນຜິດບາບໝົດ **ໂຣມ 3:23**

5. ທີ່ເຮັດໃຫ້ມະນຸດເຮົາເປັນຄົນບາບນັ້ນ ແມ່ນຍ້ອນບາບ**ໂດຍກຳເນີດ**

GCI

## *ຈ. ຜົນຂອງຄວາມບາບ → ຄວາມຕາຍ*

ເອເຟໂຊ 2:1 ໂຣມ 6:23

*ອຟຊ 2:1*
*2:1 ພະເຈົ້າໄດ້ຊົງບັນດານໃຫ້ທ່ານທັງຫລາຍຄືນມີຊີວິດເໝືອນກັນ ເຖິງແມ່ນວ່າທ່ານທັງຫລາຍ ຈະຕາຍແລ້ວໂດຍການຫລົງຜິດ ແລະ ເຮັດບາບ,*

*ໂຣມ 6:22-23*
*23 ດ້ວຍວ່າຄ່າຈ້າງຂອງຄວາມບາບ ຄື ຄວາມຕາຍ ແຕ່ຂອງພະລາຊະທານອັນໂຜດມາແຕ່ພະ ເຈົ້າ ກໍຄືຊີວິດອັນຕະຫລອດໄປເປັນນິດໃນພະຄຣິດ ຄື ພະເຢຊູເຈົ້າຂອງພວກເຮົາ.*

**ຄວາມຕາຍບໍ່ໄດ້ເປັນໂຕທຳລາຍ; ມັນເປັນໂຕແຍກ.**

1. ຄ່າຈ້າງຂອງຄວາມບາບ ຄື: ການຕາຍ**ຝ່າຍຈິດວິນຍານ**.

   ກ) ຈິດວິນຍານ ແລະ ຈິດໃຈຂອງເຮົາຖືກ**ແຍກອອກຈາກ**ພະເຈົ້າຜູ້ຊົງເປັນຊີວິດ.
   ປະຖົມມະການ 2:16-17 ເອຊາຢາ 59:2 ເອເສກຽນ 18:4, 20

   *ເອຊາຢາ 59:2*
   *2 ເພາະການບາບຂອງພວກເຈົ້າເອງ ພະອົງຈຶ່ງບໍ່ໄດ້ຍິນພວກເຈົ້າຮ້ອງຂໍໃຫ້ ຊ່ວຍເຫລືອ. ເມື່ອພວກເຈົ້າພະຍາຍາມນະມັດສະການພະເຈົ້າ ແມ່ນການບາບ ຂອງພວກເຈົ້ານັ້ນແຫລະ ທີ່ແຍກພວກເຈົ້າຈາກພະເຈົ້າ.*

2. ຄ່າຈ້າງຂອງຄວາມບາບ ຄື: ການຕາຍ**ຝ່າຍຮ່າງກາຍ.** ຈິດວິນຍານ ແລະ ຈິດໃຈຖືກແຍກອອກຈາກຮ່າງກາຍ

   ກ) ເມື່ອຮ່າງກາຍຂອງເຮົາຢຸດທຳງານແລ້ວ ເມື່ອນັ້ນເຮົາເອີ້ນວ່າການຕາຍຝ່າຍຮ່າງ ກາຍ, ສ່ວນວິນຍານແລະຈິດໃຈຈະກັບໄປຫາພະເຈົ້າເພື່ອລໍການພິພາກສາ.
   **ເພງສັນລະເສີນ 104:29; 90:10** ປັນຍາຈານ 12:7
   ໂຢບ 34:14-15 ເຮັບເຣີ 9:27

   *ເພງສັນລະເສີນ 104:29*
   *29 ເວລາພະອົງຫັນໜ້າໜີ ມັນກໍເກີດຢ້ານກົວ ເມື່ອຖອດລົມຫັນໃຈຄືນກໍກາຍ ເປັນຂີ້ດິນອີກ.*

   *ເຮັບເຣີ 9:27*
   *ມະນຸດຖືກຊົງກຳນົດໄວ້ແລ້ວວ່າຈະຕ້ອງຕາຍເທື່ອດຽວ ແລະຫລັງຈາກນັ້ນກໍຈະມີການພິພາກສາສັນໃດ.*

GCI

3. ຄ່າຈ້າງຂອງຄວາມບາບ ຄື:

ກ) **ຄວາມຕາຍອັນຕະຫລອດໄປເປັນນິດ.** ຖືກແຍກຈາກພະລັດສະໝີຂອງພະເຈົ້າຊົ່ວນິດນິລັນ.

2ເທຊະໂລນີກ 1:89 ພະນິມິດ 20:11–15

*2ທຊນ 1:8*
*8 ເພື່ອຈະລົງໂທດຕອບແທນຄົນທັງປວງທີ່ບໍ່ຮູ້ຈັກພະເຈົ້າ ແລະແກ່ຄົນທີ່ບໍ່ ຍອມເຊື່ອຟັງຂ່າວປະເສີດເລື່ອງພະເຢຊູເຈົ້າຂອງເຮົາທັງຫລາຍ.*

a) ແຕ່ສຳຫລັບຜູ້ທີ່ໄດ້ຮັບການອະໄພໂທດບາບແລ້ວ ໂດຍການສິ້ນພະຊົນຂອງພະເຢຊູຄຣິດນັ້ນຈະໄດ້ຮັບ ( **ຊີວິດ**ອັນຕະຫລອດໄປເປັນນິດ.

ລູກາ 23:46 ກິດຈະການ 7:59
2ໂກຣິນໂທ 5:68 ໂຢຮັນ 5:24
1ເທຊະໂລນີກ 4:13–18

*2ໂກຣິນໂທ 5:68*
*6 ດ້ວຍເຫດນັ້ນ ເຮົາຈຶ່ງມີໃຈກ້າຢູ່ສະເໝີ ດ້ວຍຮູ້ວ່າ ຂະນະເມື່ອເຮົາຢູ່ໃນເຮືອນ ຄືຮ່າງກາຍນີ້ ເຮົາກໍຢູ່ຫ່າງຈາກເຮືອນ ຊຶ່ງຢູ່ໃນອົງພະຜູ້ເປັນເຈົ້າ. 7 ດ້ວຍວ່າ ເຮົາດຳເນີນໄປຕາມຄວາມເຊື່ອ ບໍ່ແມ່ນຕາມທີ່ຕາເຫັນ 8 ເຮົາມີໃຈກ້າແລະພໍໃຈທີ່ຈະອອກຈາກເຮືອນຄືຮ່າງກາຍນີ້ ໄປຢູ່ເຮືອນກັບອົງພະຜູ້ເປັນເຈົ້າກໍດີກວ່າ.*

## *ສ. ການຕອບໂຕ້ຂອງມະນຸດຕໍ່ຄວາມບາບ*

1. ເຊື່ອໝັ້ນວ່າຕົນເອງຊອບທຳແລ້ວ **ເອຊາຢາ 64:6**

2. ພະຍາຍາມມີຊີວິດທີ່ດີ **ຕີໂຕ 3:5**

3. ພະຍາຍາມມີຊີວິດຕາມພະບັນຍັດຂອງພະເຈົ້າ **ມັດທາຍ 5:21–22, 27–28**

4. ສາດສະໜາອື່ນໆ ແລະ ເຄື່ອງຖວາຍຕ່າງໆ **ໂຢຮັນ 14:6 ເຮັບເຣີ 10:4**

**ເປັນຫຍັງບົດຮຽນນີ້ຄືສຳຄັນ?**

**ຄຳຕອບ: ເພື່ອຈະຮັບເອົາການອະໄພໂທດບາບໄດ້ນັ້ນ, ພວກເຮົາຕ້ອງຮູ້ຈັກສອງ ຢ່າງນີ້ກ່ອນ ຄື:**

**ຂ້ານ້ອຍເປັນຄົນບາບ.**
**ພະເຢຊູໄດ້ມາເພື່ອໂຜດເອົາຄົນບາບ.**

**ລູກາ 7:36–50**

GCI

## *ຂ. ມະນຸດຊາດຕົກຢູ່ໃນບາບໜິດ*

1. ມະນຸດເກີດມາໃນຄາບຂອງຄວາມບາບ ແລະ ຕາຍຝ່າຍຈິດວິນຍານ.

ກ) **ຕາຍໃນຄວາມບາບ** **ປະຖົມມະການ 2:16–17** **ໂກໂລຊາຍ 2:13**

ຂ) **ຄວາມບາບມີມາທາງອາດາມ** **ໂຣມ 5:12** **ເພງສັນລະເສີນ 51:5**

*ເພງສັນລະເສີນ 51:5*
*5 ຂ້າພະອົງຊົ່ວຊ້າຕັ້ງແຕ່ມື້ທີ່ໄດ້ເກີດມາ ແຕ່ຢູ່ໃນທ້ອງມາດາກໍມີບາບຢູ່ແລ້ວ.*

ຄ) **ບາບມາແຕ່ເກີດ** **1ໂກຣິນໂທ 15:22** **ເພງສັນລະເສີນ 58:3**

ງ) **ບຸດແຫ່ງພະພິໂລດ** **ເອເຟໂຊ 2:13**

2. ຕາບອດແລະຫູໜວກຕໍ່ຄວາມຈິງຝ່າຍວິນຍານ – ຄວາມຄິດມືດມົວ ຈິດໃຈກໍເສື່ອມໂຊມ.

ກ) **ໃຈທີ່ເຕັມໄປດ້ວຍການຫຼອກລວງ** **ປະຖົມມະການ 6:5** **ເຢເລມີຢາ 17:9**

ຂ) **ໃຈທີ່ຊົ່ວຮ້າຍ** **ປະຖົມມະການ 8:21** **ມາລະໂກ 7:2123**

ຄ) **ຖືກພະຂອງສະໄໝນີ້ເຮັດໃຫ້ຕາບອດ** **1ໂກຣິນໂທ 2:14**
**2ໂກຣິນໂທ 4:4**

3. ຢູ່ໃຕ້ການຄວບຄຸມຂອງຊາຕານ ແລະ ເປັນທາດຂອງຄວາມບາບ

ກ) **ເປັນທາດຕໍ່ຄວາມບາບ** **ເອເຟໂຊ 2:12** **ໂຣມ 6:20**

ຂ) **ເປັນຊະເລີຍຂອງຄວາມຊົ່ວຮ້າຍ** **2ຕີໂມທຽວ 2:25–26** **ຕີໂຕ 3:3**

ຄ) **ເປັນທາດຕໍ່ຄວາມບາບ** **ໂຢຮັນ 8:34**

4. ຄວາມບາບມີຢູ່ທົ່ວທຸກຫົນແຫ່ງ – ມະນຸດທຸກຄົນຢູ່ພາຍໃຕ້ອຳນາດຂອງມັນ – ບໍ່ມີໃຜຊອບທຳຈັກຄົນ

ກ) **ຫລົງທາງໄປໝົດ** **2ຂ່າວຄາວ 6:36** **ເອຊາຢາ 53:6**

ຂ) **ຄວາມຊອບທຳເປັນເໝືອນກັບຜ້າເປື້ອນເປີ** **2ຂ່າວຄາວ 14:13; ເອຊາຢາ 64:6**

ຄ) **ມະນຸດຢູ່ໃຕ້ຄວາມບາບ** **ເພງສັນລະເສີນ 130:3** **ໂຣມ 3:912, 23**

ງ) **ຜິດພາດຕະຫລອດ** **ຢາໂກໂບ 3:2,8** **ເພງສັນລະເສີນ 143:2**

ຈ) **ທຸກຄົນບາບໝົດ** **ສຸພາສິດ 20:9** **1ໂຢຮັນ 1:8, 10**

ສ) **ຄວາມບ້າບໍ່ໃນໃຈ *** **ປັນຍາຈານ 7:20; 9:3**

GCI

# IV. ຫລັກຄວາມເຊື່ອພື້ນຖານກ່ຽວກັບ - ຄວາມພົ້ນ

## *ກ. ຄຳແນະນຳ*

1. ຄວາມພົ້ນມີຄວາມໝາຍອ່າຢ່າງນີ້: ການ**ຖືກຊ່ອຍໃຫ້ລອດພົ້ນ,**
ການຖືກຮັກສາໄວ້**ຢ່າງປອດໄພ,**
ການ**ຖືກກອບກູ້ຄືນມາ,**
ການ**ຖືກຢຽວຢາຮັກສາ.**

2. ການຊົງໂຜດໃຫ້ພົ້ນແມ່ນຖ້ອຍແຫ່ງພະຄຳພີ ແລະ ຂ່າວປະເສີດ. **ເອຊາຢາ 45:22**
**1ຕີໂມທຽວ 2:34**

3. ໄດ້ພົ້ນຈາກ ແລະ ໄປຫາ ໂກໂລຊາຍ 1:13

*ໂກໂລຊາຍ 1:13*
*ພະອົງໄດ້ຊົງໂຜດດຶງເຮົາທັງຫລາຍໃຫ້ພົ້ນຈາກອຳນາດຂອງຄວາມມືດ ແລະ ໄດ້ຊົງໂຍກຍ້າຍພວກເຮົາໄປຕັ້ງໄວ້ໃນລາຊະອານາຈັກແຫ່ງພະບຸດ ທີ່ຮັກຂອງພະອົງ.*

ກ) **ໄດ້ພົ້ນຈາກ**:

(i) ຄວາມບາບ ແລະ ຄວາມຕາຍ — ໂຣມ 5:12; 3:23; 6:23

(ii) ພະພິໂລດ — ໂຣມ 5:9; 1ເທຊະໂລນິກ 5:9; 1:10

iii) ການທຳລາຍອັນຕະຫລອດໄປເປັນນິດ — 2ເທຊະໂລນິກ 1:810; ມັດທາຍ 10:28; 23:33; ພະນິມິດ 20:10–15; 21:8

ຂ) **ໄປຫາ**:

(i) ຄວາມຊອບທຳ

(ii) ຊີວິດ ທີ່ເຕັມລົ້ນບໍລິບູນ ແລະ ເປັນຢູ່ຕະຫລອດໄປເປັນນິດ

(iii) ສັນຕິສຸກ ແລະ ຄວາມຊົມຊື່ນຍິນດີ — ພະນິມິດ 21:18

GCI

4. ການຊົງໂຜດໃຫ້ພົ້ນແມ່ນແຜນການຂອງພະເຈົ້າ, ບໍ່ແມ່ນຂອງມະນຸດ, ບໍ່ແມ່ນຂອງສາສະໜາ.

ກ) "ການຊົງໂຜດໃຫ້ພົ້ນເປັນຂອງອົງພະຜູ້ເປັນເຈົ້າ." **ເພງສັນລະເສີນ 3:8**

ຂ) "ຄວາມພົ້ນນັ້ນມີມາຈາກພະຜູ້ເປັນເຈົ້າ ." **ໂຢນາ 2:9**

ຄ) ມີພຽງຜູ້ດຽວເທົ່ານັ້ນທີ່ສາມາດໂຜດໃຫ້ພົ້ນໄດ້ **ກິດຈະການ 4:12**

ງ) ມີພຽງທາງດຽວ – ພະຜູ້ໂຜດໃຫ້ພົ້ນພຽງຜູ້ດຽວເທົ່ານັ້ນ **ໂຢຮັນ 14:6**

## *ຂ. ມະນຸດຕ້ອງການພະຜູ້ໂຜດໃຫ້ພົ້ນ*

1. ມະນຸດເກີດມາໃນຄາບຂອງຄວາມບາບ ໂຣມ 5:12 1ໂກຣິນໂທ 15:22
   ແລະ ຕາຍ**ຝ່າຍວິນຍານ**. ເພງສັນລະເສີນ 51:5; 58:34

2. ມະນຸດຢູ່ໃນຄາບຂອງຄວາມຕາຍແລ້ວ ບໍ່ອາດຊ່ອຍຕົນເອງໃຫ້**ພົ້ນໄດ້**. ໂຢບ 14:4
   ລາວບໍ່ລິດເດດອຳນາດຫຍັງທີ່ຈະໄປປ່ຽນທຳມະຊາດຂອງຕົນໄດ້ ໂຢຮັນ 5:40; 6:44, 65; 17:2
   ເຢເຣມີຢາ 13:23
   ກິດຈະການ 11:18
   ມັດທາຍ 7:16–18; 12:33

*ໂຢບ 14:4*
*4 ບໍ່ມີຜູ້ໃດທ່ອນເຮັດດອກ ທີ່ຈະນຳເອົາສິ່ງສະອາດອອກມາຈາກສິ່ງທີ່ເປື້ອນເປິ ດັ່ງມະ ນຸດເຮົານີ້!*

**ມະນຸດຕາຍແລ້ວ, ລາວຕ້ອງການຊີວິດ.**
**ລາວຕ້ອງການພະຜູ້ຊ່ອຍໃຫ້ພົ້ນ.**

## *ຄ. ພະຜູ້ໂຜດໃຫ້ພົ້ນຄື - ພະເຢຊູຄຣິດ*

ລູກາ 2:30; 3:6

*ລູກາ 2:30*
*30 ເພາະວ່າຕາຂ້າພະອົງໄດ້ເຫັນຄວາມພົ້ນທີ່ມາຈາກພະອົງແລ້ວ*

*ລູກາ 3:6*
*6 ມະນຸດທັງປວງຈະເຫັນການທີ່ພະເຈົ້າຊົງໂຜດໃຫ້ພົ້ນ*

ການໂຜດໃຫ້ພົ້ນນັ້ນມັນຮຽກຮ້ອງໃຫ້ມີຄົນຜູ້ໜຶ່ງທີ່ສາມາດໂຜດຜູ້ອື່ນໄດ້. ຄື ຜູ້ທີ່ມີອຳນາດ ແລະ ລິດເດດ.
**ເອຊາຢາ 43:3, 11–13; 45:21**

1ໂຢຮັນ 4:14 "ພະບິດາໄດ້ຊົງໃຊ້ພະບຸດມາເປັນ**ຜູ້ໂຜດ**ມະນຸດໂລກໃຫ້ລອດພົ້ນ."

ລູກາ 2:30; 3:6 ພະເຢຊູຊົງຖືກເອີ້ນວ່າເປັນ**ຄວາມພົ້ນ**ຈາກພະເຈົ້າ.

GCI

## 1. ຄວາມເປັນ **ພະເຈົ້າ**ຂອງພະເຢຊູຄຣິດ - ພະອົງຊົງເປັນພະເຈົ້າ.

ກ) ເຢໂຮວາໃນພະຄຳພີເດີມ ແມ່ນ **ພະເຢຊູ**ໃນພະຄຳພີໃໝ່.
ເອຊາຢາ 44:6; 41:4; 48:12
ພະນິມິດ 1:8, 17; 22:13

ຂ) ພະອົງຊົງ**ເປັນຢູ່ຕະຫລອດໄປເປັນນິດ** ແລະມີພຽງພະເຈົ້າເທົ່ານັ້ນທີ່ເປັນຢູ່ນິ ລັນດອນໄດ້.

1 ຕີໂມທຽວ 1:17; 6:14–16 ມີກາ 5:2

ຄ) ພະອົງຊົງເປັນ**ພະເຈົ້າ** ທັງໄດ້ຊົງນິລະມິດສ້າງຊັບພະສິ່ງ

ໂຢຮັນ 1:14, 14, 18

ງ) ພະອົງຊົງ**ຄ້ຳຊູ**ຊັບພະສິ່ງທັງປວງໄວ້ດ້ວຍກັນ

ເຮັບເຣີ 1:3, ໂກໂລຊາຍ 1:17

ຈ) ສະພາບຂອງ**ພະເຈົ້າ**ສະຖິດຢູ່ໃນພະກາຍຢ່າງເຕັມບໍລິບູນ.

ໂກໂລຊາຍ 2:9

ສ) ຊົງສະພາບຂອງພະເຈົ້າ ແລະ **ເທົ່າທຽມ**ກັບພະເຈົ້າ

ຟີລິບປອຍ 2:6

ຊ) ພະເຢຊູຊົງມາຈາກພະເຈົ້າດ້ວຍ**ລິດອຳນາດ**.

ໂຢຮັນ 8:42 ຄາລາເຕຍ 4:4

ຍ) ສະພາບການ**ຊົງເປັນຢູ່ກ່ອນແລ້ວ**ຂອງພະອົງ ແລະນັ້ນໝາຍຄວາມວ່າພະອົງ ຊົງເປັນພະເຢໂຮວາໃນສະໄໝພະຄຳພີເດີມ.

ໂຢຮັນ 8:5159 ອົບພະຍົບ 3:14

ດ) ຊົງສະພາບເປັນ**ອັນໜຶ່ງອັນດຽວກັນ** ຫລື ເປັນຜູ້ດຽວກັນກັບພະເຈົ້າພະບິດາ

ໂຢຮັນ 10:30,31,33

ຕ) ຊົງເອີ້ນ**ພະເຈົ້າ**ວ່າ ພະບິດາ

ເຮັບເຣີ 1:8

GCI

ຖ) **ຊົງຍົກບາບ**ໄດ້. ມີແຕ່ພະເຈົ້າເທົ່ານັ້ນທີ່ຈະສາມາດຍົກບາບໄດ້.

ລູກາ 5:20–24

ທ) ພະອົງຊົງມີ**ອຳນາດ**ທັງປວງໃນຟ້າສະຫວັນ ແລະ ແຜ່ນດິນໂລກ. ມີແຕ່ພະເຈົ້າເທົ່ານັ້ນທີ່ມີອຳນາດນີ້.

2. ຊົງສະເດັດມາບັງເກີດເປັນ**ມະນຸດ**. ຊົງສະພາບພະເຈົ້າ. ພະບຸດຂອງພະເຈົ້າ ແລະ ບຸດມະນຸດ

*ຟີລິບປອຍ 2:511*
*5 ເຈົ້າທັງຫລາຍຈົ່ງມີນ້ຳໃຈຕໍ່ກັນເໝືອນຢ່າງທີ່ມີໃນພະເຢຊູຄຣິດ, 6 ພະອົງຊົງສະ ພາບຂອງພະເຈົ້າ ແຕ່ບໍ່ໄດ້ຊົງຖືວ່າການເທົ່າທຽມກັບພະເຈົ້ານັ້ນເປັນສິ່ງທີ່ຕ້ອງຍຶດ ຫວງໄວ້, 7 ແຕ່ໄດ້ກັບຊົງຍອມສະລະ ແລະ ຊົງຮັບສະພາບຂ້ອຍຂ້າ ຊົງຖືກຳເນີດເປັນ ມະນຸດ. 8 ແລະເມື່ອຊົງປາກົດພະອົງໃນສະພາບມະນຸດແລ້ວ ພະອົງກໍຊົງຖ່ອມພະ ອົງລົງ ຍອມເຊື່ອຟັງຈົນເຖິງຄວາມມໍລະນາ ຄື ເຖິງຄວາມມໍລະນາທີ່ໄມ້ກາງແຂນ. 9 ເຫດສັນນັ້ນ ພະເຈົ້າຈຶ່ງໄດ້ຊົງຍົກພະອົງຂຶ້ນເຖິງທີ່ສູງສຸດ ແລະ ໄດ້ຊົງປະທານພະ ນາມນັ້ນ ຊຶ່ງຢູ່ເໜືອນາມທັງປວງໃຫ້ແກ່ພະອົງ, 10 ເພື່ອເພາະພະນາມນັ້ນທຸກຫົວ ເຂົ່າໃນສະຫວັນ ເທິງແຜ່ນດິນໂລກ, ແລະໃຕ້ພື້ນດິນກໍດີ ຈະໄດ້ຄຸເຂົ່າລົງຂາບພະເຢຊູ, 11 ເພື່ອທຸກລີ້ນຈະຍອມຮັບວ່າ, "ພະເຢຊູຄຣິດຊົງເປັນອົງພະຜູ້ເປັນເຈົ້າ" ອັນເປັນ ການຖວາຍພະກຽດແກ່ພະບິດາເຈົ້າ.*

ກ) ເພາະມະນຸດຜູ້ເປັນຄົນບາບຈຳເປັນຕ້ອງມີການຊົງໂຜດໄຖ່ ຊຶ່ງມັນຮຽກຮ້ອງໃຫ້ ມີພະຜູ້ໂຜດໃຫ້ພົ້ນ ແລະ ມີແຕ່ພະເຈົ້າເທົ່ານັ້ນທີ່ສາມາດໂຜດເຮົາໃຫ້ພົ້ນໄດ້

ຂ) **ລູກາ 19:10** "ດ້ວຍວ່າບຸດມະນຸດໄດ້ມາເພື່ອຈະຊອກຫາແລະໂຜດເອົາຜູ້ທີ່ຫລົງ ເສຍໄປແລ້ວນັ້ນໃຫ້ລອດພົ້ນ."

ຄ) **1ຕີໂມທຽວ 1:15** " . . . ຄືວ່າພະເຢຊູຄຣິດໄດ້ສະເດັດເຂົ້າມາໃນໂລກເພື່ອ ຈະຊົງໂຜດເອົາຄົນບາບໃຫ້ພົ້ນ."

ງ) ພະເຈົ້າ, ພະເຢຊູຄຣິດ ໄດ້ຊົງສະເດັດລົງມາບັງເກີດເປັນ**ມະນຸດ**ໃນໂລກນີ້.

ຈ) ໄດ້ຊົງເປັນຢ່າງທີ່ພວກເຮົາເປັນ. ເຮັບເຣີ 2:14–17; 4:14–15
ເສກາລີຢາ 9:9

**ພະເຈົ້າໄດ້ຊົງສະເດັດມາເປັນໜຶ່ງໃນພວກເຮົາ, ເພື່ອເຮົາຈະເຂົ້າໃຈເລື່ອງພະອົງຫຼາຍ ຂຶ້ນ ແລະ ພະອົງຊົງເຂົ້າໃຈເຮົາດີ.**

ສ) ຄວາມບາບໄດ້ເຂົ້າມາໃນໂລກນີ້ດ້ວຍມະນຸດຄົນດຽວສັນໃດ. **ຄວາມພົ້ນ**ກໍມາດ້ວຍມະນຸດຄົນດຽວສັນນັ້ນ.
ໂຣມ 5:12, 18–19

ຊ) ພະເຢຊູໄດ້ຊົງກະທຳໃນສິ່ງທີ່ອາດເຮັດພາດ – ຄືຊົງມີຊີວິດທີ່**ປາດສະຈາກຄວາມບາບ**.
1ໂກຣິນໂທ 15:21–22 ເຮັບເຣີ 4:15

GCI

## ງ. ການສິ້ນພະຊົນຂອງພະຜູ້ໄຖ່, ຊຶ່ງຖືກຕອກຄຶງທີ່ໄມ້ກາງແຂນ

1. ພະອົງຊົງຮັບ**ແທນ**ຂ້າພະເຈົ້າ — ໂຣມ 5:6,8; 8:32; 2ໂກຣິນໂທ 5:21; ເອຊາຢາ 53; ໂກໂລຊາຍ 2:13–15

2. **ການຊົງໄຖ່** ເປັນການໂຜດຊ່ວຍ ຫລື ໂຜດໃຫ້ພົ້ນໂດຍການຈ່າຍເພື່ອຊື້ຄືນມາ.

   ກ) ພາສາກຣີກ: ເປັນການໄປຊື້ເຄື່ອງໃນຕະຫລາດ. ມະນຸດເປັນທາດ,"ຖືກຂາຍໃຫ້ກັບຄວາມບາບ" (ໂຣມ 7:14) ແລະ ຢູ່ພາຍໃຕ້ຄວາມຕາຍ (ໂຣມ 6:23) ແຕ່ໄດ້ຖືກຊື້ມາແລ້ວດ້ວຍພະເຢຊູຄຣິດ (1ໂກຣິນໂທ 6:17–20; 7:23)

   ຂ) **ໄດ້ຊົງຊື້** ມະນຸດໝົດທຸກຄົນແລ້ວ ເຫດສັນນັ້ນ, ຈຶ່ງຊົງມີສິດທີ່ຈະເຮັດກັບເຂົາແນວໃດກໍໄດ້ຕາມເຫັນຊອບພະໄທພະອົງ. — 2ເປໂຕ 2:1; ຕີໂຕ 2:11–14

   ຄ) **ຊົງຈ່າຍ**ດ້ວຍ: ເລືອດ — ພະນິມິດ 5:9; 1ເປໂຕ 1:18–19

   ງ) **ຊື້ດົນເທົ່າໃດ?** — ເຮັບເຣີ 9:12

   ຈ) **ພາສາກຣີກ:** ເປັນການປົດປ່ອຍ ຫລື ເຮັດໃຫ້ເປັນອິດສະລະ

      (i) ຈາກການປະຕິບັດພະບັນບັດ, ຈາກຄວາມບໍ່ຍຸດຕິທຳ — ຕີໂຕ 2:14

      (iii) ຈາກການລະເມີດ ແລະ ຮັບການອະໄພ**ໂທດບາບ** — ເອເຟໂຊ 1:7

3. **ການຊົງຊຳລະໃຫ້ເປັນຜູ້ຊອບທຳ** ໝາຍຄວາມວ່າ ເຮັດໃຫ້ເປັນຜູ້ຊອບທຳ

| | |
|---|---|
| **ຊອບທຳ (ເປັນທຳ)** | **ຖືກຕ້ອງຕາມກົດໝາຍ** |
| **ຊຳລະໃຫ້ຊອບທຳ** | **ພົ້ນຈາກຄຳກ່າວຫາ, ປະກາດວ່າບໍ່ມີຄວາມຜິດອີກ.** |
| **ຄົນຊອບທຳ** | **ມີສິນທຳຖືກຕ້ອງ, ທ່ຽງທຳ.** |

**ໂຣມ 3:21–28**

ກ) ຂໍ້ 21 **ຄວາມຊອບທຳ**ຂອງພະເຈົ້າທີ່ປາກົດອອກໃນພະບັນຍັດ ບັດນີ້ກໍໄດ້ ປາກົດອອກແລ້ວໃນພະເຢຊູຄຣິດ ແລະ ການຊົງໂຜດໃຫ້ພົ້ນຂອງພະອົງ.

GCI

ຂ) ຂໍ້ 22 ເປັນຄວາມຊອບທຳຂອງພະເຈົ້າທີ່ຊົງປະທານແກ່ທຸກຄົນທີ່**ເຊື່ອ**ໃນພະເຢຊູຄຣິດ ຄື ເຊື່ອວ່າພະອົງເທົ່ານັ້ນທີ່ຊົງໂຜດໃຫ້ພົ້ນ.

ຄ) ຂໍ້ 24 ເປັນຂອງປະທານທີ່ມີມາໂດຍພະຄຸນຂອງພະອົງ, ພະອົງຊົງປະກາດວ່າ ຄົນເຫລົ່ານັ້ນທີ່ເຊື່ອກໍຖືກຊຳລະໃຫ້ຊອບທຳ ຫລື ກາຍເປັນຄົນຊອບທຳ ແລ້ວ, ເພາະການ**ຊົງໂຜດໄຖ່**ຂອງພະເຢຊູຄຣິດນັ້ນ. ເປັນຂອງປະທານຟຣີ. ເປັນສິ່ງທີ່ເຮົາບໍ່ສົມຄວນຈະໄດ້ຮັບ. ບໍ່ສາມາດຊື້ໄດ້ດ້ວຍເງິນ ຫລື ດ້ວຍອັນໃດກໍຕາມ. ພະອົງຊົງປະທານໃຫ້ເພາະດ້ວຍພະຄຸນຂອງພະອົງເທົ່ານັ້ນ. ເອເຟໂຊ 2:8ກ

ງ) ຂໍ້ 25 ດ້ວຍ**ພະໂລຫິດ**ຂອງພະເຢຊູຄຣິດເທົ່ານັ້ນ ທີ່ເຮັດໃຫ້ພະເຈົ້າຊົງອົດກັ້ນຕໍ່ຄວາມບາບໄດ້.

ຈ) ຂໍ້ 26 ໃນຄວາມຊອບທຳຂອງພະອົງນັ້ນຕ້ອງມີ**ການຖວາຍ**ຕາມຄວາມເໝາະສົມ(ຖືກຕ້ອງ) ບໍ່ເຊັ່ນນັ້ນແລ້ວ ພະອົງຈະບໍ່ມີສິດຍົກຜິດບາບຂອງຜູ້ທີ່ວາງໃຈເຊື່ອໄດ້.

ສ) ຂໍ້ 27-28 ພວກເຮົາຖືກຊຳລະໃຫ້ບໍລິສຸດ - ຊົງປະກາດວ່າ ເຮົາບໍ່ມີບາບ - ໂດຍ ຄວາມເຊື່ອໃນພະເຢຊູ, ບໍ່ແມ່ນຍ້ອນການປະຕິບັດຂອງເຮົາເອງ.

ຄາລາເຕຍ 2:16

ຊ) ຜົນຈາກຄວາມເຊື່ອ ຫລື **ການເຊື່ອ**ໃນພະເຢຊູຄຣິດ:

(i) ພະເຈົ້າຊົງປະກາດວ່າຄົນຜູ້ນັ້ນເປັນທີ່ຊອບ ຫລື ຊອບທຳ ແລະ ຊົງປະທານຄວາມຊອບທຳຂອງພະອົງໃຫ້ເປັນຂອງລາວດ້ວຍ.

ໂຣມ 3:22, 46 2ໂກຣິນໂທ 5:21

(ii) ບັດນີ້ກາຍເປັນຜູ້ຊອບທຳ, ພະວິນຍານບໍລິສຸດໄດ້ສະເດັດເຂົ້າມາສະ ຖິດຢູ່ “ໃນ” ຄົນຜູ້ນັ້ນແລ້ວ.

ໂຣມ 8:9-11 1ໂກຣິນໂທ 3:16; 6:19

*1ໂກຣິນໂທ 3:16*
*16 ເຈົ້າທັງຫລາຍບໍ່ຮູ້ຫລືວ່າ ພວກເຈົ້າເປັນວິຫານຂອງພະເຈົ້າ ແລະ ພະວິນຍານຂອງພະເຈົ້າຊົງສະຖິດຢູ່ໃນພວກເຈົ້າ.*

**ອັນນີ້ແມ່ນ “ການບັງເກີດຝ່າຍຈິດວິນຍານ”**

ໂຢຮັນ 3:58

**ຫລື ເປັນ “ການບັງເກີດໃໝ່”**

1ເປໂຕ 1:23 ຕີໂຕ 3:5

GCI

*1ເປໂຕ 1:23*
*23 ດ້ວຍວ່າທ່ານທັງຫລາຍໄດ້ເກີດໃໝ່ແລ້ວ ບໍ່ແມ່ນຈາກແນວປູກທີ່ ອາດເປື່ອຍເນົ່າ ແຕ່ເກີດຈາກແນວປູກທີ່ບໍ່ອາດເປື່ອຍເນົ່າ ຄືເກີດຈາກ ພະທຳຂອງພະເຈົ້າອັນຊົງຊີວິດ ແລະຕັ້ງໝັ້ນຄົງ.*

4. ການຊົງສິ້ນພະຊົນຂອງພະຜູ້ໂຜດໃຫ້ພົ້ນເປັນ: **ການຄືນດີກັນ**

**ເພື່ອກອບກູ້ຄວາມສຳພັນອັນຖືກຕ້ອງກັບມາ.**

ກ) ບໍ່ແມ່ນສັດຕູກັນ ແຕ່ໄດ້ຄືນດີກັນແລ້ວ ໂຣມ 5:10

*ໂຣມ 5:10*
*10 ດ້ວຍວ່າຖ້າທ່ານທັງຫລາຍຍັງເປັນສັດຕູຕໍ່ພະເຈົ້າ ພະເຈົ້າໄດ້ຊົງໂຜດໃຫ້ ພວກເຮົາໄດ້ກັບຄືນດີກັບພະອົງ ໂດຍທີ່ພະບຸດຂອງພະອົງຊົງສິ້ນພະຊົນ ແລ້ວ ຫລາຍກວ່ານັ້ນອີກ ເມື່ອເຮົາທັງຫລາຍໄດ້ກັບຄືນດີແລ້ວ ພວກເຮົາກໍຈະ ໄດ້ພົ້ນດ້ວຍການຊົງຄືນພະຊົນຂອງພະອົງ.*

(i) ເມື່ອກ່ອນເປັນສັດຕູກັນ, ແຕ່ດຽວນີ້ໄດ້ປ່ຽນມາເປັນຄວາມສຳພັນແບບ ມິດສະຫາຍກັນກັບພະເຈົ້າ. ອັນນີ້ເກີດຂຶ້ນແລ້ວໃນອາດີດ ຄືທີ່ໄມ້ກາງ ແຂນ ບ່ອນທີ່ຜິດບາບຂອງເຮົາໄດ້ຖືກຊົດໃຊ້ ແລະ ຍົກອອກໄປເສຍ.

ຂ) **ຖືກຊົງສ້າງຂຶ້ນໃໝ່ໂດຍຜ່ານທາງການຄືນດີກັນນີ້**

2ໂກຣິນໂທ 5:17-21

5. ການສິ້ນພະຊົນຂອງພະຜູ້ໄຖ່ເປັນ **ການເຮັດໃຫ້ບໍລິສຸດ.**

ໄດ້ຖືກແຍກອອກຈາກສະພາບຄົນທົ່ວໄປ ແລະ ຊົງນຳໃຊ້. ຕັ້ງໄວ້ສະເພາະຕ່າງຫາກ.
ເຮັບເຣີ 9:21-22

*ເຮັບເຣີ 9:21-22*
*21 ໃນທຳນອງດຽວກັນນັ້ນ ທ່ານກໍໄດ້ເລືອດຊົດໃສ່ສຳນັກຜ້າ ກັບເຄື່ອງໃຊ້ໃນພິທີນະມັດ ສະການທຸກຊະນິດເໝືອນກັນ. 22 ແລ້ວຕາມພະບັນຍັດນັ້ນ ເກືອບທຸກສິ່ງຕ້ອງຊຳຣະ ດ້ວຍເລືອດ ແລະ ຖ້າບໍ່ມີເລືອດໄຫລອອກແລ້ວ ການໃຫ້ອະໄພກໍບໍ່ມີ.*

ໃນລັກສະນະຂອງຄວາມສະອາດບໍລິສຸດ - ບໍລິສຸດ.

ກ) **ໜ້າທີ່ທີ່ຕ້ອງເຮັດ** → ໃນພະຄຣິດ (ຝ່າຍວິນຍານ). ພະອົງຊົງເຮັດແລ້ວໆ. ໃນອາດີດ, ການປະຕິບັດກໍສຳເລັດແລ້ວ.

(i) ງານຂອງພະອົງ - ຄວາມຮັບຜິດຊອບຂອງພະອົງ. **1ໂກຣິນໂທ 1:30**

(ii) ຊົງເຮັດສຳເລັດແລ້ວທີ່ໄມ້ກາງແຂນ **ເຮັບເຣີ 10:10; 13:12**
**ໂກໂລຊາຍ 1:22**

(iii) ເປັນທາງໄປສູ່ຄວາມພົ້ນ **2ເທຊະໂລນິກ 2:13**

GCI

ຂ) **ການຈະເລີນເຕີບໃຫຍ່** → ພະຄຣິດຊົງຢູ່ໃນທ່ານ(ຈິດວິນຍານ) – ໜ້າທີ່ຮັບຜິດຊອບຂອງຂ້າພະເຈົ້າ.

(i) ໂດຍຜ່ານທາງການເຊື່ອຟັງ. **1ເປໂຕ 1:14–16, 22**

(ii) ງານຂອງພະອົງສືບຕໍ່ **ເຮັບເຣີ 10:14**

(iii) ເຮັດສ່ວນຂອງພວກເຮົາ **2ໂກຣິນໂທ 7:1**

6. ການສິ້ນພະຊົນຂອງພະເຢຊູຄຣິດເປັນ **ການປິ່ນປົວຮັກສາ.**

**ກ**) ຮອຍແສ້ຂ້ຽນຕີຂອງພະອົງ **ເອຊາຢາ 53:45**
**1ເປໂຕ 2:24**

ຂ) ຊົງແບກເອົາການເຈັບເປັນຂອງເຮົາໄປ **ມັດທາຍ 8:17**

7. ການສິ້ນພະຊົນ ແລະການຫລັ່ງເລືອດຂອງພະເຢຊູຄຣິດເທົ່ານັ້ນ ທີ່ຈະເປັນທີ່**ພໍພະໄທ** ພະເຈົ້າໄດ້.

ກ) ພະເຢຊູຄຣິດຊົງເຮັດໃຫ້ຄວາມຮຽກຮ້ອງຕ້ອງການອັນບໍລິສຸດຂອງພະເຈົ້າ ເລື່ອງການພິພາກສາບາບເປັນທີ່ສຳເລັດໄດ້ ດ້ວຍການຫລັ່ງເລືອດຂອງພະອົງ ທີ່ໄມ້ກາງແຂນ.

(i) ພະໂລຫິດຂອງພະເຢຊູຄຣິດເປັນພຽງສິ່ງດຽວທີ່ຈະເຮັດໃຫ້ພະເຈົ້າ ສາມາດອົດກັ້ນຕໍ່ຄວາມບາບໄດ້.
**ໂຣມ 3:25** ອົບພະຍົບ 12:13

(ii) ເຮັດໃຫ້ຜິດບາບຂອງໂລກນີ້ໄດ້ຮັບການແກ້ໄຂ. **1ໂຢຮັນ 2:2; 4:10**

ຂ) ດ້ວຍເຫດນັ້ນ ຜູ້ທີ່ເຊື່ອຈຶ່ງໄດ້ຮັບ**ຄວາມຟື້ນ!**

ຂ້າພະເຈົ້າເຂົ້າຫາພະເຈົ້າໂດຍທາງພະໂລຫິດເທົ່ານັ້ນ. ບໍ່ແມ່ນຍ້ອນການປະຕິບັດຂອງຂ້າພະເຈົ້າເອງ. ເຮັບເຣີ 4:16; 10:22 ດ້ວຍໃຈກ້າ ເພາະດ້ວຍພະໂລຫິດ.

## *ຈ. ການຊົງເປັນຄືນມາຈາກຕາຍຂອງພະຜູ້ໄຖ່, ພະເຢຊູຄຣິດ*

1. ເປັນການປະກາດວ່າຊົງເປັນພະບຸດຂອງພະເຈົ້າດ້ວຍລິດເດດ. **ໂຣມ 1:4**

2. ເປັນການປະກາດເຖິງເຄື່ອງຂອງພະອົງ, ການສິ້ນພະຊົນ ແລະ ການຫລັ່ງເລືອດຂອງພະອົງສຳເລັດແລ້ວ ແລະ ຄວາມບາບໄດ້ຖືກຍົກອອກໄປແລ້ວ. **ໂຣມ 4:25**

3. ຜູ້ທີ່ໄດ້ຮັບການຊົງຊຳລະໃຫ້ຊອບທຳແລ້ວດ້ວຍພະໂລຫິດຂອງພະອົງນັ້ນກໍຈະໄດ້ເປັນຄືນມາເພື່ອຮັບຊີວິດອັນຕະຫລອດໄປເປັນນິດ ແລະ ໄດ້ເຫັນພະອົງ **ໂຢຮັນ 14:19**

GCI

## *ສ. ການຂຶ້ນຄອງລາດຂອງພະຜູ້ໄຖ່, ພະເຢຊູຄຣິດ.*

1. **ເຮັບເຣີ 1:3**

*3 ພະບຸດນັ້ນເປັນແສງສະທ້ອນພະສະງ່າລາສີຂອງພະເຈົ້າແລະມີສະພາບເປັນແບບ ພິມດຽວກັນກັບພະອົງ ແລະຊົງຄ້ຳຊູພິພົບໂລກໄວ້ດ້ວຍພະວັດຈະນະອັນຊົງລິດຂອງ ພະອົງ ເມື່ອພະອົງຊົງຊຳລະຄວາມຜິດບາບ ແລ້ວ ກໍຊົງປະທັບຢູ່ເບື້ອງຂວາຂອງຜູ້ຊົງ ລິດທານຸພາບໃນບ່ອນສູງ.*

2. ສາມາດເຂົ້າໄປໃນຫ້ອງບໍລິສຸດໄດ້ **ເຮັບເຣີ 9:21-24**

ພະອົງໄດ້ຊົງຊິດພະໂລຫິດຂອງພະອົງເອງໃສ່ບ່ອນທີ່ບໍລິສຸດທີ່ສຸດໃນສະຫວັນ, ເພື່ອ ພວກເຮົາ. ເຫດສັນ ນັ້ນ ພວກເຮົາຈຶ່ງສາມາດເຂົ້າໄປໃນບ່ອນທີ່ບໍລິສຸດໄດ້.

3. ເຂົ້າໄປດ້ວຍໃຈກ້າຫານ **ເຮັບເຣີ 10:19**

4. ຊົງອ້ອນວອນຂໍພະກະລຸນາເພື່ອພວກເຮົາ

ເຮັບເຣີ 7:25 ໂຢຮັນ 17
ໂຣມ 8:34-39 1ໂຢຮັນ 2:1

**ປະໂລຫິດທີ່ສົມບູນແບບກໍໄດ້ຖວາຍເຄື່ອງບູຊາທີ່ບໍ່ມີຕຳນິ ທັງເປັນການອ້ອນວອນທີ່ບໍ່ມີຕຳນິດ້ວຍ ແລ້ວຈະນຳເຮົາໄປເຖິງຄວາມພົ້ນອັນສົມບູນແບບ.**

## *ຊ. ການຮັບເອົາການຊົງໂຜດໃຫ້ພົ້ນຈາກພະຜູ້ໄຖ່.*

1. ການບໍ່ເອົາໃຈໃສ່ບໍ່ອາດນຳມາຊຶ່ງຄວາມພົ້ນອັນຍິ່ງໃຫຍ່ໄດ້ **ເຮັບເຣີ 2:14**
ຖ້າພວກເຮົາເບິ່ງຂ້າມຄວາມພົ້ນອັນໃຫຍ່ນີ້ ພວກເຮົາກໍຈະບໍ່ສາມາດຫລຸດພົ້ນອອກຈາກ ຄວາມບາບ → ການພິພາກສາ → ພະພິໂລດ → ຄວາມຕາຍໄດ້.

2 ພະຄຸນຂອງພະເຈົ້າໄດ້ນຳເອົາຄວາມພົ້ນມາ *(ເພີ່ມເຂົ້າໃໝ່)* **ຕີໂຕ 2:11**

ພະຄຸນຂອງພະເຈົ້າໄດ້ນຳເອົາການຊົງໂຜດໃຫ້ພົ້ນມາເຖິງມະນຸດທຸກໆຄົນ.

3. ລິດເດດຂອງພະເຈົ້າໄດ້ນຳເອົາຄວາມພົ້ນມາ *(ເພີ່ມເຂົ້າໃໝ່)* **ໂຣມ 1:16**

ລິດເດດຂອງພະເຈົ້າສຳຫລັບການຊົງໂຜດໃຫ້ພົ້ນນັ້ນມີມາໂດຍຜ່ານທາງການໄດ້ຍິນ ຂ່າວປະເສີດ.

4. ການກັບໃຈ(ຖິ້ມໃຈເກົ່າເອົາໃຈໃໝ່)ນຳເອົາຄວາມພົ້ນມາ *(ເພີ່ມເຂົ້າໃໝ່)* **2ໂກຣິນໂທ 7:9–10**
ນອກເໜືອຈາກການໄດ້ຍິນແລ້ວ ຈຳເປັນຕ້ອງມີການຖິ້ມໃຈເກົ່າເອົາໃຈໃໝ່ເສຍກ່ອນ ຈຶ່ງນຳມາຊຶ່ງຄວາມພົ້ນໄດ້.

1ເທຊະໂລນິກ 1:910 ລູກາ 5:32; 24:47
ກິດຈະການ 11:18; 2:38; 2ເປໂຕ 3:9

GCI

5. ການສາລະພາບດ້ວຍປາກໄດ້ນຳເອົາຄວາມພົ້ນມາ **ໂຣມ 10:9–18**

6. ການຮ້ອງອອກພະນາມຂອງພະເຈົ້າໄດ້ນຳເອົາຄວາມພົ້ນມາ **ເພງສັນລະເສີນ 116:1–13**

## *ຍ. ຄວາມພົ້ນສຳຫລັບອະນາຄົດ*

1. ຂ້າພະເຈົ້າ**ຈະຖືກ**ຊົງໂຜດໃຫ້ພົ້ນ. ຮ່າງກາຍຂອງຂ້າພະເຈົ້າ

ກ) ພົ້ນຈາກ**ຜິດບາບ**ທີ່ມີຢູ່ດຽວນີ້: ໂດຍການຊົງໂຜດຮ່າງກາຍຂອງຂ້ານ້ອຍໃຫ້ພົ້ນ
1ໂກຣິນໂທ 15:50–57
1ເທຊະໂລນິກ 4:15–18

ຂ) ຈາກຄວາມ**ເສື່ອມໂຊມ**ຂອງໂລກ ໂຣມ 8:11, 18–25
ແລະ ຮ່າງກາຍນີ້.

ຄ) ເມື່ອໃດ? ເມື່ອ**ສຽງແກ**ຄັ້ງສຸດທ້າຍດັງຂຶ້ນ.

ງ) ສ່ວນຂອງຂ້າພະເຈົ້າກໍຄື – **ຕ້ອງພຽນອົດທົນ / ພຽນພະຍາຍາມ**

ຈ) ຕໍ່ໄປນີ້ແມ່ນຫລັກຄວາມເຊື່ອເລື່ອງ **ການຖວາຍພະກຽດ**.

(i) ໂຣມ 13:11 1ໂກຣິນໂທ 15:42–44; 51–53

(ii) ເຮັບເຣີ 9:28 1ເປໂຕ 1:5

ສິ່ງທີ່ພະເຈົ້າຊົງລິເລີ່ມ ໄດ້ສຳເລັດລົງແລ້ວ.

ໂຣມ 8:29–30 ເອຊາຢາ 49:6 51:6

<u>**ລາຍຊື່ເອກະສານອ້າງອີງ:**</u>

1. E. H. Bickersteth, *The Trinity,* 1965
2. K. Barth, *Church Dogmatics,* 1936, pp.1:1-339ff.
3. H. Bavinck, *The Doctrine of God*, 1951, pp. 225-334
4. J. M. Boice, “The Sovereign God,” *Foundations of the Christian Faith* (1978), pp. 137-147, 210
5. R. S. Franks, *The Doctrine of the Trinity,* 1953
6. *Nelson's Illustrated Bible Dictionary*, (Thomas Nelson Publishers), 1986
7. *New Unger's Bible Dictionary*, (Moody Press : Chicago, Illinois), 1988